**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 078 /ກພວຕ

ນະຄອນຫຼວງວຽງຈັນ, ວັນທີ 9 ມິຖຸນາ 2025

# ໜັງສືແຈ້ງການ

**ຮຽນ:** ທ່ານລັດຖະມົນຕີ, ອົງການທຽບເທົ່າ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ;

- ທ່ານ ເລຂາທິການສະພາແຫ່ງຊາດ;
- ທ່ານ ຫົວໜ້າຫ້ອງການ, ສູນກາງແນວລາວສ້າງຊາດ;
- ທ່ານ ຫົວໜ້າຫ້ອງການ, ຄະນະຈັດຕັ້ງສູນກາງພັກ;
- ທ່ານ ຫົວໜ້າຫ້ອງການ, ຄະນະພົວພັນຕ່າງປະເທດສູນກາງພັກ;
- ທ່ານ ຫົວໜ້າກົມບໍລິຫານ, ຫ້ອງວ່າການສູນກາງພັກ;
- ທ່ານ ຫົວໜ້າກົມບໍລິຫານ, ຫ້ອງວ່າການສຳນັກງານປະທານປະເທດ;
- ທ່ານ ຫົວໜ້າຫ້ອງການ, ຄະນະໂຄສະນາອົບຮົມສູນກາງພັກ;
- ທ່ານ ຫົວໜ້າກົມບໍລິຫານ-ພິທີການ ແລະ ການເງິນ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ທ່ານ ຫົວໜ້າຫ້ອງການ, ສະຖາບັນການເມືອງ ແລະ ການປົກຄອງ ແຫ່ງຊາດ;
- ທ່ານ ຫົວໜ້າຫ້ອງການ, ສູນກາງສະຫະພັນແມ່ຍິງລາວ;
- ທ່ານ ຫົວໜ້າຫ້ອງການ, ສູນກາງສະຫະພັນກຳມະບານລາວ;
- ທ່ານ ຫົວໜ້າຫ້ອງການ, ສູນການຊາວໜຸ່ມປະຊາຊົນປະຕິວັດລາວ;
- ທ່ານ ຫົວໜ້າຫ້ອງການ, ທະນາຄານ ແຫ່ງ ສປປ ລາວ;
- ທ່ານ ຫົວໜ້າຫ້ອງການ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ;
- ທ່ານ ຫົວໜ້າຫ້ອງການ, ມະຫາວິທະຍາໄລ, ສະຖາບັນ-ສູນຄົ້ນຄວ້າ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ປະກາດຮັບສະໝັກຫົວຂໍ້ຄົ້ນຄວ້າວິທະຍາສາດ ງວດທີ II ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ປະຈຳປີ 2025.

- ອີງຕາມ ດຳລັດວ່າດ້ວຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 681/ລບ, ລົງວັນທີ 24 ທັນວາ 2021;
- ອີງຕາມ ບົດບັນທຶກກອງະຊຸມກອງປະຊຸມສະໄໝສາມັນ ຂອງສະພາບໍລິຫານກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ປະຈຳປີ 2024 ຄັ້ງວັນທີ 01 ພະຈິກ 2023.

ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ (ກພວຕ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ: ໃນລະຫວ່າງວັນທີ 06 ມິຖຸນາ ຫາ 08 ກໍລະກົດ 2025, ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ເປີດຮັບສະໝັກ ຫົວຂໍ້

ຄົ້ນຄວ້າວິທະຍາສາດ ງວດທີ II ປະຈຳປີ 2025. ຂອບເຂດການຄົ້ນຄວ້າ ທີ່ກອງທຶນໃຫ້ການສະໜັບສະໜູນ ຕາມຂົງເຂດ ດັ່ງລຸ່ມນີ້:

1. ການຫັນປ່ຽນການເຕີບໂຕເສດຖະກິດຕາມທິດທີ່ມີຄຸນນະພາບ, ສົມດຸນ ແລະ ຕໍ່ເນື່ອງ;
2. ການດຸ່ນດ່ຽງແຫຼ່ງທຶນເພື່ອການພັດທະນາ;
3. ການຍົກສູງປະສິດທິຜົນການລົງທຶນ (ການລົງທຶນດ້ານສະທາລະນະ, ການລົງທຶນຈາກຕ່າງປະເທດ, ການຊ່ວຍເຫຼືອລ້າ ແລະ ການລົງທຶນຈາກຊຸມຊົນ);
4. ການນຳໃຊ້ຂະແໜງເສດຖະກິດປາຍແຫຼມ ເພື່ອຍູ້ການເຕີບໂຕ ເສດຖະກິດ ທີ່ມີຄວາມຍືນຍົງ;
5. ການພັດທະນາເຂດແຄວ້ນ ຕິດພັນກັບແລວເສດຖະກິດ ແລະ ເຂດພັດທະນາຕ່າງໆ;
6. ການສ້າງແຜນວຽກ ການພັດທະນາປະຊາກອນໜຸ່ມ ຂອງ ສປປລາວ;
7. ການສ້າງລາຍຮັບງົບປະມານທີ່ມີຄວາມໝັ້ນຄົງ ຕິດພັນກັບການສ້າງຖານລາຍຮັບທີ່ຍືນຍົງ ແລະ ເກັບລາຍຮັບທີ່ຄົບຖ້ວນ;
8. ການພັດທະນາລັດວິສາຫະກິດທີ່ເປັນຖານລາຍຮັບແຫ່ງຊາດທີ່ ໝັ້ນຄົງ;
9. ການຈັດຕັ້ງປະຕິບັດນະໂຍບາຍການເງິນ ເພື່ອຊຸກຍູ້ການເຕີບໂຕ ສີຂຽວ;
10. ການສົ່ງເສີມພາກເອກະຊົນເຂົ້າມາມີສ່ວນຮ່ວມໃນການພັດທະນາພື້ນຖານໂຄງລ່າງ ທີ່ຕິດພັນ ກັບການເຊື່ອມໂຍງ ເຊື່ອມຈອດພາກພື້ນ ແລະ ສາກົນ.
11. ການດຸ່ນດ່ຽວຂາເຂົ້າ-ຂາອອກສິນຄ້າ ແລະ ການບໍລິການ (ສິນ ຄ້າອຸປະໂພກ-ບໍລິໂພກ, ສິນຄ້າ ກະສິກຳ ແລະ ອຸດສາຫະກຳ);
12. ການປັບປຸງການເຂົ້າເຖິງແຫຼ່ງທຶນ ຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ;
13. ຍູ້ແຮງຜະລິດກະສິກຳ (ປູກຝັງ-ລ້ຽງສັດ-ລ້ຽງປາ) ທີ່ເປັນທ່າແຮງຂອງແຕ່ລະທ້ອງຖິ່ນ ເພື່ອຫຼຸດຜ່ອນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ (ທີ່ໄດ້ມາດຖານ, ຕິດພັນກັບຕະຫຼາດ, ຕິດພັນກັບຕ່ອງໂສ້ການຜະລິດ, ການຈໍລະຈອນພາຍໃນ);
14. ການພັດທະນາຊົນນະບົດແບບໃໝ່ ຕິດພັນການສ້າງກຸ່ມການຜະລິດ ແລະ ສະຫະກອນໃໝ່;
15. ການຄຸ້ມຄອງຊັບພະຍາກອນທຳມະຊາດທີ່ມີຄວາມຍືນຍົງ ຕິດພັນກັບການປົກປັກຮັກສາ ແຫຼ່ງນ້ຳ, ຄວາມຊຸ່ມຊື່ນຂອງດິນ, ຊີວະນາໆພັນ ແລະ ການປ່ຽນແປງດິນຟ້າອາກາດ;
16. ການຈັດສັນທີ່ດິນ ທີ່ຕິດພັນກັບການແບ່ງເຂດການຜະລິດ ເພື່ອສົ່ງເສີມການລົງທຶນ ຂອງພາກເອກະຊົນ;
17. ການຄຸ້ມຄອງບໍລິຫານລັດ ທີ່ມີຄວາມກະທັດຮັດ, ວອງໄວ ແລະ ມີປະສິດທິພາບ ໂດຍລົງເລິກການປະເມີນດ້ານກົງຈັກ, ຄວາມສາມາດຂອງພະນັກງານ, ການປະລະໜ້າທີ່ຂອງພະນັກງານ, ການບໍລິການປະຕູດຽວ ແລະ ການແບ່ງຂັ້ນຄຸ້ມຄອງ;
18. ການພັດທະນາເສດຖະກິດດິຈິຕ້ອນ ຕິດພັນກັບການສ້າງລາຍຮັບງົບປະມານ;
19. ການດຸ່ນດ່ຽງການສະໜອງແຮງງານ ໃຫ້ແກ່ການຜະລິດ ແລະ ສະຫະກອນແບບໃໝ່;
20. ການແກ້ໄຂບັນຫາການປະລະການຮຽນ ແລະ ການເຂົ້າຮຽນ ໃນທຸກລະດັບ ຕິດພັນກັບການຍົກສູງຄຸນນະພາບຂອງຜົນການຮຽນ;
21. ການສ້າງສະຖຽນລະພາບເສດຖະກິດມະຫາພາກ ຂອງ ສປປ ລາວ ໂດຍລົງເລິກການແກ້ໄຂເງິນເຟີ້ ແລະ ອັດຕາແລກປ່ຽນ;
22. ການສົ່ງເສີມເສດຖະກິດພູມປັນຍາ ຕິດພັນກັບມູນເຊື້ອ ແລະ ເອກະລັກຂອງຊາດ;

ການສະໜັກຫົວຂໍ້ຄົ້ນຄວ້າວິທະຍາສາດ ໃຫ້ປະກອບເອກະສານຕາມແບບພິມ ທີ່ກອງທຶນໄດ້ກຳນົດໄວ້ ດັ່ງລຸ່ມນີ້:

1. ປະກອບແບບພິມລົງທະບຽນຫົວຂໍ້ຄົ້ນຄວ້າວິທະຍາສາດ (Concept Note) ໃຫ້ຄົບຖ້ວນ;

- ຫົວໜ້າຫົວຂໍ້ຄົ້ນຄວ້າ ມີວຸດທິວິທະຍາສາດລະດັບປະລິນຍາເອກ ຫຼື ປະລິນຍາໂທ ທີ່ມີຜົນງານຄົ້ນຄວ້າຕີພິມລົງໃນວາລະສານສາກົນ ມາກ່ອນ ຢ່າງໜ້ອຍ 01-02 ສະບັບ ແລະ ຫົວໜ້າຫົວຂໍ້ຄົ້ນຄວ້າ ແລະ ນັກຄົ້ນຄວ້າຫຼັກໄດ້ລົງທະບຽນໃນຖານຂໍ້ມູນ ນັກຄົ້ນຄວ້າ ຂອງກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
- ລະບຸ ບຸກຄະລາກອນທີມງານຄົ້ນຄວ້າ 5-7 ທ່ານ (ນັກຄົ້ນຄວ້າຫຼັກ, ວິຊາການດ້ານເຕັກນິກ ແລະ ການເງິນ).

2. ປະກອບແບບພິມບົດສະເໜີຫົວຂໍ້ຄົ້ນຄວ້າວິທະຍາສາດ ສະບັບສົມບູນ ( Full Project) ໃຫ້ຄົບຖ້ວນ;
3. ປະກອບແບບພິມປະຫວັດຫຍໍ້, ສຳເນົາໃບປະກາດສະນີຍາບັດ, ໃບຢັ້ງຢືນ ກ່ຽວກັບວຸດທິການສຶກສາ ຂອງຫົວໜ້າຫົວຂໍ້, ທີມງານນັກຄົ້ນຄວ້າ ໃຫ້ຄົບຖ້ວນ.

ລະບຽບການ, ແບບພິມ ທີ່ກ່ຽວຂ້ອງ ໄດ້ລະບຸໄວ້ໃນ QR Code. ກະລຸນາປະກອບເອກະສານ ຂອງທ່ານໃຫ້ຄົບຖ້ວນ ແລະ ສົ່ງຊຸດເອກະສານໃຫ້ກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ກ່ອນວັນທີ 30 ມິຖຸນາ 2025 ເພື່ອດຳເນີນການພິຈາລະນາ ແລະ ອະນຸມັດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ນຳສະເໜີຫົວຂໍ້ຄົ້ນຄວ້າ ຕາມທາງຄວນດ້ວຍ.

ຮັບແທນ **ປະທານສະພາບໍລິຫານ**

ປອ. ສຳລານ ພັນຄະວົງ

ສະແກນ QR Code

ຕິດຕໍ່ປະສານງານ:

1. ທ່ານ ໂຈ້ ພຸດທະເສນ ໂທ: 020 29499096
2. ທ່ານ ນ. ຈັນສຸດາ ວິຈິດຕຣາ ໂທ: 020 55097989